# ໄດ້ຮັບການຍົກໂທດຄວາມຜິດບາບຈາກພຣະເຈົ້າ

GOSPEL 316

***"ຄວາມສຸກເປັນຂອງຜູ້ທີ່ໄດ້ຮັບການອະໄພບາບກຳແລະ
ເປັນຂອງຜູ້ທີ່ໄດ້ຮັບການຍົກໂທດ ຈາກຄວາມຜິດ."
ເພງສັນລະເສີນ ໓໒:໑***

ຄວາມຜິດທີ່ພວກເຮົາເຮັດ (ໃນພຣະຄຳພີເອີ້ນວ່າບາບ) ແຍກພວກເຮົາອອກຈາກພຣະເຈົ້າ. ເຮົາຈຳເປັນຕ້ອງໄດ້ຮັບການໃຫ້ອະໄພບາບກຳຈາກພຣະເຈົ້າ ເພື່ອຈະໄດ້ຄືນດີກັບພຣະອົງ ... ‘ພື່ອພ້ອມສຳລັບຊີວິດອັນຕະຫຼອດໄປເປັນນິດ. ການໃຫ້ອະໄພບາບກຳຕາມພຣະຄຳພີ ພຣະເຈົ້າບໍ່ໄດ້ໝາຍຄວາມວ່າ ພຣະອົງຈະເບິ່ງຂ້າມຄວາມບາບເຫຼົ່ານັ້ນ ແລະ ປັດຄວາມບາບເຫຼົ່ານັ້ນອອກໄປເສຍ. ແຕ່ບໍ່ແມ່ນເລີຍ, ເພາະໂທດກຳເຫຼົ່ານັ້ນຕ້ອງໄດ້ຮັບການຊຳລະ. ຂ່າວດີ (ຂ່າວປະເສີດ) ກໍ່ຄືພຣະເຢຊູ [ພຣະເຈົ້າຜູ້ບໍ່ມີຄວາມຜິດບາບ] ໄດ້ຊຳລະຄ່າຈ້າງຂອງຄວາມຜິດບາບລ່ວງໜ້າໃຫ້ແກ່ທ່ານ ດ້ວຍພຣະໂລຫິດຂອງພຣະອົງ ໂດຍການຕາຍເທິງໄມ້ກາງແຂນ. ໃນອີກດ້ານໜຶ່ງຄື, ພຣະອົງໄດ້ເຂົ້າມາແທນທ່ານ. ພຣະເຢຊູໄດ້ກາຍເປັນຜູ້ຮັບບາບກຳແທນທ່ານ. ແຕ່ນັ້ນຍັງບໍ່ພຽງພໍ. ການຊຳລະຄວາມຜິດບາບນັ້ນຕ້ອງຖືກນຳໃຊ້ກັບທ່ານ ... ລວມເຂົ້າໃນບັນຊີຂອງທ່ານດ້ວຍ. ຄຳຖາມທີ່ສຳຄັນຄື, ມັນຈະເກີດຂຶ້ນໄດ້ແນວໃດ? ມັນຈະເກີດຂຶ້ນໄດ້ເມື່ອທ່ານກັບໃຈ (ຫັນໜີຈາກບາບຂອງທ່ານ ແລ້ວໄປຫາພຣະເຈົ້າ) ແລະ ເຊື່ອໃນອົງພຣະເຢຊູ. ມີພຽງທາງນັ້ນ, ແລະ ທາງດຽວນີ້ເທົ່ານັ້ນ, ທ່ານຈຶ່ງຈະໄດ້ຮັບການຍົກໂທດຄວາມຜິດບາບຈາກພຣະເຈົ້າ.

## *ບັນຫາຂອງພວກເຮົາ ... ການຖືກແຍກອອກ*

*"ດ້ວຍວ່າ, ທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັດສະໝີຂອງພຣະເຈົ້າ."* ໂຣມ ໓:໒໓

*"ເພາະການບາບຂອງພວກເຈົ້າເອງ ພຣະອົງຈຶ່ງບໍ່ໄດ້ຍິນພວກເຈົ້າຮ້ອງຂໍໃຫ້ຊ່ວຍເຫລືອ. ເມື່ອພວກເຈົ້າພະຍາຍາມນະມັດສະການພຣະເຈົ້າ ແມ່ນການບາບຂອງພວກເຈົ້ານັ້ນແຫລະ ທີ່ແຍກພວກເຈົ້າຈາກພຣະອົງ."* ເອຊະຢາ ໕໙:໒

*"ເພື່ອລົງໂທດຜູ້ທີ່ປະຕິເສດພຣະເຈົ້າ ແລະຜູ້ທີ່ບໍ່ຍອມເຊື່ອຟັງຂ່າວປະເສີດເລື່ອງອົງພຣະເຢຊູເຈົ້າຂອງພວກເຮົາ. ພຣະເຈົ້າຈະເຮັດໃຫ້ພວກເຂົາຖືກທົນທຸກແລະໄດ້ຮັບໂທດ ແລະຖືກທຳລາຍຕະຫລອດໄປ ຄືຖືກແຍກຈາກອົງພຣະຜູ້ເປັນເຈົ້າ ແລະຈາກຣິດທານຸພາບ ສະຫງ່າຣາສີອັນຮຸ່ງເຮືອງຂອງພຣະອົງ."* ໒ ເທສະໂລນິກ ໑:໘-໙

*"ດ້ວຍວ່າ, ຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄືຊີວິດນິຣັນດອນໃນພຣະເຢຊູຄຣິດເຈົ້າ ອົງພຣະຜູ້ເປັນເຈົ້າຂອງພວກເຮົາ."* ໂຣມ ໖:໒໓

*"ຂະນະທີ່ພວກເຮົາຍັງຂາດກຳລັງຢູ່ນັ້ນ ພຣະຄຣິດໄດ້ຕາຍເພື່ອຊ່ວຍຄົນບາບຕາມເວລາທີ່ເໝາະສົມ."* ໂຣມ ໕:໖

## *ທາງອອກຂອງພະເຈົ້າ ... ການປ່ຽນແທນ*

*"ເພາະວ່າ ພຣະເຈົ້າຊົງຮັກໂລກຫລາຍທີ່ສຸດ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕະຫລອດໄປເປັນນິດ."* ໂຢຮັນ ໓:໑໖

*"ຄວາມຮັກທີ່ເຮົາກ່າວເຖິງນີ້ ບໍ່ແມ່ນເຮົາທັງຫລາຍໄດ້ຮັກພຣະເຈົ້າ ແຕ່ພຣະເຈົ້າໄດ້ຊົງຮັກພວກເຮົາ ແລະຊົງໃຊ້ພຣະບຸດຂອງພຣະອົງສະເດັດມາ* [ເພື່ອເປັນເຄື່ອງບູຊາ] *ໄຖ່ບາບກຳຂອງພວກເຮົາ."* ໑ ໂຢຮັນ ໔:໑໐

*"ແຕ່ພຣະເຈົ້າໄດ້ຊົງສຳແດງໃຫ້ພວກເຮົາເຫັນວ່າ ພຣະອົງຊົງຮັກພວກເຮົາຫລາຍເທົ່າໃດ ຄືຂະນະທີ່ພວກເຮົາຍັງເປັນຄົນບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມຕາຍແທນເຮົາທັງຫລາຍ."* ໂຣມ ໕:໘

*"ໃນພຣະກາຍຂອງພຣະອົງເອງ ພຣະອົງໄດ້ຊົງຮັບແບກບາບຂອງພວກເຮົາໄປເຖິງຕົ້ນໄມ້ນັ້ນ ເພື່ອພວກເຮົາຈະໄດ້ຕາຍເສຍຝ່າຍການບາບ ແລະມີຊີວິດຝ່າຍຄວາມຊອບທຳ, ດ້ວຍບາດແຜຂອງພຣະອົງ ເຈົ້າທັງຫລາຍກໍດີປົກກະຕິແລ້ວ."* ໑ ເປໂຕ ໒:໒໔

*"ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ* [ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ] *ພຣະອົງກໍຊົງປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າ."* ໂຢຮັນ ໑:໑໒

## *ເສັ້ນທາງຂອງທ່ານ ສູ່ການໄດ້ຮັບການຍົກໂທດຄວາມຜິດບາບຈາກພຣະເຈົ້າ ... ສູ່ຄວາມງພຣະເຢຊູຄຣິດ*

"ໂດຍພຣະອົງ [ພຣະເຢຊູ] *ຜູ້ທຳນວາຍທຸກຄົນກໍໄດ້ກ່າວເຖິງພຣະອົງໂດຍປະກາດວ່າ ທຸກຄົນທີ່ເຊື່ອໃນພຣະອົງ ຈະໄດ້ຮັບການອະໄພບາບກຳໂດຍນາມຊື່ຂອງພຣະອົງ,"* ກິດຈະການ໑໐:໔໓, *"ດ້ວຍວ່າ, ຊຶ່ງເຈົ້າທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ, ສິ່ງເຫຼົ່ານີ້ ບໍ່ແມ່ນພວກເຈົ້າເຮັດເອງ ແຕ່ພຣະເຈົ້າຊົງປະທານໃຫ້. ຄວາມພົ້ນນັ້ນ ບໍ່ແມ່ນໄດ້ມາຍ້ອນການປະຕິບັດຂອງພວກເຈົ້າເອງ ເພື່ອວ່າບໍ່ໃຫ້ຜູ້ໃດຜູ້ໜຶ່ງອວດໄດ້,"* ເອເຟໂຊ ໒:໘-໙. ທ່ານສາມາດເຊື່ອໃນ (ບໍ່ພຽງແຕ່ເຊື່ອກ່ຽວກັບ) ພຣະເຢຊູໂດຍການສາລະພາບຄວາມຜິດບາບຈາກ ... ເທົ່ານັ້ນ, ໂດຍການກັບໃຈມາຫາພຣະເຢຊູດ້ວຍຄວາມເຊື່ອ. ຄຳອະທິຖານນີ້ຄືຫົນທາງທີ່ທ່ານກໍ່ສາມາດເຮັດໄດ້. ມັນບໍ່ແມ່ນການສາບານ ຫຼື ທ່ອງມົນຄາຖາ. ຈົ່ງອະທິຖານຖ້າມັນເປັນຄວາມປາຖະໜາຢ່າງແທ້ຈິງໃນຫົວໃຈຂອງທ່ານ.

**ຂ້າແດ່ ພຣະເຈົ້າ,**
**ຂ້ານ້ອຍ ຍອມຮັບຄວາມປາຖະໜາຂອງຂ້ານ້ອຍວ່າ ... ຂ້ານ້ອຍເປັນຄົນບາບ.**
**ຂ້ານ້ອຍ ຂໍກັບໃຈຈາກ ... ຂ້ານ້ອຍຫັນໜີຈາກຄວາມບາບທີ່ຂ້ານ້ອຍໄດ້ກະທຳ ເຂົ້າມາຫາພຣະອົງ.**
**ຂ້ານ້ອຍ ເຊື່ອໃນອົງພຣະເຢຊູ ... ພຣະອົງຊົງເປັນພຣະເຈົ້າ, ພຣະອົງຕາຍເທິງໄມ້ກາງແຂນເພື່ອຂ້ານ້ອຍ.**
**ຂ້ານ້ອຍ ຂໍເຊີນພຣະອົງເຂົ້າມາ ເປັນພຣະຜູ້ຊ່ວຍໃຫ້ພົ້ນ ຈາກຄວາມຜິດບາບຂອງຂ້ານ້ອຍ.**
**ອາແມນ**

ພຣະເຢຊູໄດ້ຈ່າຍຄ່າລົງໂທດສຳລັບບາບກຳຂອງທ່ານແລ້ວ. ແລະ ໂດຍການເຊື່ອໃນອົງພຣະເຢຊູ, ການຈ່າຍຄ່າຂອງພຣະອົງກໍ່ກາຍມາເປັນການຊົດໃຊ້ຄືນຂອງທ່ານແລ້ວ.
ທ່ານໄດ້ຮັບການຍົກໂທດບາບກຳຈາກພຣະເຈົ້າແລ້ວ ແລະ ພຣະເຢຊູໄດ້ກ່າວວ່າທ່ານໄດ້ຮັບຄວາມລອດພົ້ນຕະຫລອດໄປເປັນນິດແລ້ວ, ໂຢຮັນ ໓:໑໖.

***"ຄວາມສຸກເປັນຂອງຜູ້ທີ່ໄດ້ຮັບການອະໄພບາບກຳແລະເປັນຂອງຜູ້ທີ່ໄດ້ຮັບການຍົກໂທດຈາກຄວາມຜິດ." ເພງສັນລະເສີນ ໓໒:໑***

**ຖ້າທ່ານອະທິຖານຢ່າງຈິງໃຈ,** ທ່ານໄດ້ຮັບການຍົກໂທດຄວາມຜິດບາບຈາກພຣະເຈົ້າ ແລະ ທ່ານຈະປອດໄພຢູ່ໃນພຣະອົງຕະຫຼອດໄປເປັນນິດ. ການຕາຍທີ່ເສຍສະລະຂອງພຣະເຢຊູໄດ້ເປັນການຍົກໂທດຄວາມຜິດບາບໃຫ້ອະໄພແກ່ທ່ານ. ພຣະເຈົ້າໄດ້ສັນຍາວ່າ ບັດນີ້ທ່ານໄດ້ມີຊີວິດອັນຕະຫຼອດໄປເປັນນິດ ເປັນສົມບັດນະປະຈຸບັນຂອງທ່ານ ... ວ່າທ່ານຈະບໍ່ໄດ້ເຂົ້າໄປໃນການພິພາກສາ ... ແຕ່ວ່າທ່ານໄດ້ພົ້ນຈາກຄວາມຕາຍເຂົ້າສູ່ຊີວິດ, ໂຢຮັນ ໕:໒໔. ທ່ານມີຄວາມປອດໄພ ເພາະບໍ່ມີຜູ້ໃດສາມາດດຶງທ່ານອອກຈາກກຳມືທີ່ມີອຳນາດຂອງພຣະອົງ. ພຣະອົງຍຶດໝັ້ນຢູ່ໃນຕົວທ່ານ ຫລາຍກວ່າທີ່ທ່ານຈະຍຶດໝັ້ນໃນພຣະອົງ. ພຣະເຢຊູໄດ້ກ່າວວ່າ, *"ເຮົາໃຫ້ຊີວິດນິຣັນດອນແກ່ພວກເຂົາ ແລະພວກເຂົາກໍຈະບໍ່ຈິບຫາຍຈັກເທື່ອ ບໍ່ມີຜູ້ໃດຍາດເອົາພວກເຂົາອອກຈາກມືຂອງເຮົາໄດ້. ສິ່ງທີ່ພຣະບິດາເຈົ້າຂອງເຮົາໄດ້ໃຫ້ແກ່ເຮົານັ້ນ ກໍໃຫຍ່ກວ່າທຸກສິ່ງ. ແລະບໍ່ມີຜູ້ໃດຍາດເອົາພວກເຂົາຈາກກຳມືພຣະບິດາເຈົ້າຂອງເຮົາໄດ້,"* ໂຢຮັນ ໑໐:໒໘-໒໙.

**ຖ້າຫາກທ່ານ ບໍ່ພ້ອມທີ່ຈະກ່າວຄຳອະທິຖານນັ້ນ,** ຈົ່ງໃຫ້ມັນເປັນບູລິມະສິດສູງສຸດຂອງທ່ານ. ການຕັດສິນໃຈຂອງທ່ານມີຄວາມສຳຄັນ ແລະ ຜົນນິລັນດອນ. ບໍ່ມີໂອກາດຄັ້ງທີ່ສອງ ຫລາຍໄປກວ່າບ່ອນຝັງສົບ, *"ມະນຸດທຸກຄົນຖືກຊົງກຳນົດໄວ້ແລ້ວວ່າ, ຈະຕ້ອງຕາຍເທື່ອດຽວ ແລະຫລັງຈາກນັ້ນຈະຖືກມີການພິພາກສາສັນໃດ ,"* ເຮັບເຣີ ໙:໒໗. ຖ້າທ່ານມີຄຳຖາມທີ່ຍັງບໍ່ໄດ້ຮັບຄຳຕອບ ຊຶ່ງຂັດຂວາງການຕັດສິນໃຈຂອງທ່ານ, ໃຫ້ທ່ານຈົ່ງໂອ້ລົມກັບຜູ້ທີ່ໃຫ້ສິ່ງນີ້ແກ່ທ່ານ.

## ພາບປະກອບ ແລະ ຄຳນິຍາມ

**ການຍົກໂທດຄວາມຜິດບາບ.**
ການໃຫ້ອະໄພ. ການໃຫ້ອະໄພໃນພຣະຄຳພີ ຮຽກຮ້ອງໃຫ້ມີການລົງໂທດ ເປັນຄ່າຕອບແທນຄວາມບາບຂອງພວກເຮົາ. ການລົງໂທດສຳລັບຄວາມບາບ ແມ່ນການຖືກແຍກອອກຈາກພຣະເຈົ້ານິລັນດອນ. ການໃຫ້ອະໄພໃນພຣະຄຳພີແມ່ນການໂອນບາບ ແລະ ການລົງໂທດຂອງພວກເຮົາໄປຫາພຣະເຢຊູ. ພຣະເຈົ້າໄດ້ມອບບາບແລະການລົງໂທດຂອງພວກເຮົາໃຫ້ກັບພຣະເຢຊູຜູ້ທີ່ບໍ່ມີບາບ. ແລະ ຫຼັງຈາກນັ້ນພຣະເຈົ້າໄດ້ໃຫ້ຄວາມຊອບທຳຂອງພຣະອົງແກ່ພວກເຮົາ. ມັນເໝືອນກັບວ່າມີປື້ມສອງຫົວຢູ່ໃນສະຫວັນ. ຫົວທຳອິດ, ເປັນປຶ້ມບັນທຶກຂອງທ່ານ, ມີເຄື່ອງຫມາຍໃນປຶ້ມ ສຳລັບຄວາມຜິດທຸກໆຢ່າງ ທີ່ທ່ານເຄີຍເຮັດ. ແຕ່ລະຫນ້າຖືກປົກຄຸມດ້ວຍເຄື່ອງຫມາຍ. ພຣະຄຳພີໄດ້ບອກຢ່າງຈະແຈ້ງວ່າ ບາງສິ່ງທີ່ເຮົາເຮັດເປັນຄວາມບາບ (ບາບຂອງການມອບໝາຍ) ແລະ ບາງສິ່ງທີ່ເຮົາບໍ່ເຮັດກໍເປັນບາບ (ບາບຂອງການລະເວັ້ນ). ເຖິງແມ່ນວ່າບາງຄວາມຄິດກໍ່ອາດເປັນບາບ. ມີຄວາມບາບສາມຄັ້ງຕໍ່ມື້ກໍເທົ່າກັບ ໑,000 ບາບໃນແຕ່ລະປີ. ຕະຫຼອດຊົ່ວຊີວິດ, ນັ້ນແມ່ນຄວາມບາບມະຫາສານ. ແລະປຶ້ມອີກຫົວໜຶ່ງ ແມ່ນປຶ້ມບັນທຶກຂອງພຣະເຢຊູທີ່ບໍ່ມີບາບ. ແຕ່ລະໜ້າແມ່ນສະອາດ ແລະ ບໍ່ມີຈຸດດ່າງດຳ. ເມື່ອເຈົ້າເຊື່ອໃນພຣະເຢຊູ, ມັນເໝືອນກັບວ່າປຶ້ມທັງສອງຫົວນັ້ນຖືກແລກປ່ຽນກັນ. ຫຼັງຈາກນັ້ນ, ປຶ້ມບັນທຶກ ທີ່ມີຊື່ຂອງເຈົ້າຢູ່ໃນນັ້ນ ແມ່ນສະອາດໝົດ. ຄວາມບາບຂອງທ່ານ ແລະ ການລົງໂທດຂອງມັນໄດ້ໝົດໄປ.

**ທາງອອກທີ່ແທ້ຈິງ.**
ພຣະເຢຊູໄດ້ກ່າວວ່າ, *"ພຣະເຢຊູເຈົ້າຕອບເພິ່ນວ່າ, "ເຮົານີ້ແຫຼະ ເປັນທາງນັ້ນ ເປັນຄວາມຈິງ ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາເຈົ້າໄດ້ ນອກຈາກມາທາງເຮົາ,"* ໂຢຮັນ ໑໔:໖. ວິທີການແກ້ໄຂບັນຫາເລື່ອງຄວາມບາບ - ສາເຫດທີ່ເຮັດໃຫ້ເຮົາ ຖືກແຍກອອກຈາກພຣະເຈົ້າ ໃນພຣະຄຳພີນັ້ນແມ່ນບໍ່ຄືໃຜ. ສາສະຫນາອື່ນໆຮຽກຮ້ອງໃຫ້ພວກເຮົາປະເຊີນໜ້າກັບບາບກຳຂອງພວກເຮົາຊົ່ວນິລັນດອນ ໂດຍຫວັງວ່າຈະມີພຣະໃດໜຶ່ງທີ່ອາດຈະເບິ່ງຂ້າມບາບກຳຂອງພວກເຮົາ. ວິທີຂອງພຣະເຢຊູມີຄວາມພິເສດ ໂດຍສະເພາະການຍົກໂທດຄວາມຜິດບາບຂອງພວກເຮົາ ... ຊຳລະເຮົາໃຫ້ສະອາດ. ຫຼັງຈາກນັ້ນ, ພວກເຮົາປະເຊີນໜ້າກັບພຣະເຈົ້າ ແລະ ບາບກຳຂອງພວກເຮົາທີ່ຖືກລຶບຕະຫຼອດໄປເປັນນິດ ເພາະຄວາມບາບເຫລົ່ານັ້ນໄດ້ຖືກໂອນໄປຫາພຣະເຢຊູຄຣິດເຈົ້າໝົດແລ້ວ. ອັກຄະສາວົກເປໂຕໄດ້ກ່າວວ່າ, *"ໃນຜູ້ອື່ນຄວາມລອດພົ້ນບໍ່ມີດ້ວຍວ່າ, ບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ ທີ່ຊົງປະທານແກ່ມະນຸດ ເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ພົ້ນ,"* ກິດຈະການ ໔:໑໒. ອັກຄະສາວົກໂປໂລໄດ້ຂຽນວ່າ, *"ດ້ວຍວ່າ, ມີພຣະເຈົ້າອົງດຽວ ແລະມີຜູ້ກາງແຕ່ຜູ້ດຽວ ລະຫວ່າງພຣະເຈົ້າກັບມະນຸດ ຄືພຣະຄຣິດເຈົ້າເຢຊູຜູ້ຊົງສະພາບເປັນມະນຸດ, ຜູ້ທີ່ໄດ້ສະຫລະພຣະອົງເອງ ເພື່ອເປັນຄ່າໄຖ່ມະນຸດສະໂລກທຸກຄົນ ຊຶ່ງການນີ້ໄດ້ກ່າວເປັນຄຳພະຍານໃນເວລາອັນເໝາະສົມ,"* ໑ ຕີໂມເຕ ໒:໕-໖. ທາງຂອງພະເຢຊູ ເປັນທາງອອກທີ່ແທ້ຈິງ.

**ການເຊື່ອໃນພຣະເຢຊູຄຣິດ.**
ການເຊື່ອໃນພຣະເຢຊູເປັນຫຼາຍກວ່າ *ການເຊື່ອກ່ຽວກັບ* ພຣະເຢຊູ. ລອງຈິນຕະນາການວ່າ ທ່ານເປັນຜູ້ໂດຍສານໃນຍົນລຳໜຶ່ງທີ່ບິນຢູ່ສູງເໜືອພູເຂົາ ເມື່ອທັນໃດນັ້ນເຄື່ອງຈັກຂອງຍົນກໍ່ເລີ່ມສະດຸດ ແລະ ລົ້ມເຫຼວ. ຍົນລຳນີ້ກຳລັງຕົກລົງຢ່າງແຮງ ສູ່ການລະເບີດພ້ອມແປວໄຟລຸກຂຶ້ນ. ນັກບິນສັ່ງໃຫ້ທຸກຄົນໃສ່ຣົ່ມຊູຊີບ ແລະ ອອກຈາກຍົນຜ່ານປະຕູທີ່ເປີດອອກ. ທ່ານຮູ້ຈັກກັບຣົ່ມຊູຊີບ. ທ່ານເຄີຍເຫັນໃນໂທລະພາບ. ແຕ່ຕອນນີ້ມັນຕ່າງກັນ. ການກ້າວອອກຈາກປະຕູຍົນທີ່ເປີດໃນນັ້ນ ຕ້ອງການຫຼາຍກ່ວາ *ການເຊື່ອກ່ຽວກັບ* ຣົ່ມຊູຊີບ ... ມັນຕ້ອງການ *ການເຊື່ອໃນ* ຣົ່ມຊູຊີບດ້ວຍ. ແລະ ກະເປົ໋າເປ້ຂອງນັກປີນພູເຂົາບາງຄົນໃຊ້ບໍ່ໄດ້. ຄວາມຢູ່ລອດຂອງທ່ານຕ້ອງໃຊ້ຣົ່ມຊູຊີບທີ່ຖືກຕ້ອງ ... ການກ້າວອອກໄປໂດຍບໍ່ມີມັນແມ່ນຕາຍແນ່ນອນ. ການກ້າວອອກໄປດ້ວຍຣົ່ມຊູຊີບ ເປັນຄວາມຕັ້ງໃຈ ໑00 % ໃນຄວາມເຊື່ອ. ທ່ານອາດຈະມີຄວາມສົງໄສ ... ແຕ່ການຢູ່ລອດ ຕ້ອງອາໄສຄວາມເຊື່ອໝັ້ນຢ່າງເຕັມທີ່ໃນຣົ່ມຊູຊີບ. ພຣະເຢຊູເປັນຣົ່ມຊູຊີບອັນຕະລອດໄປເປັນນິດທີ່ແທ້ຈິງ, ກ້າວອອກໄປດ້ວຍສັດທາ. ເຊື່ອໃນພຣະອົງ!

**ຄຳແນະນຳໃນການຈັດພິມ.** ແນະນຳໃຫ້ຈັດພິມອອກສອງດ້ານໃນໜ້າດຽວ. ພິມເປັນສີ ຫຼື ຂາວດຳ.

*ການຍົກໂທດຄວາມຜິດບາບຈາກພຣະເຈົ້າ* © ໒໐໒໔ ຖືກຈັດພິມໂດຍ ກິດຈະການໜຶ່ງແປດ ແລະມາຈາກ www. Gospel316.org. ທ່ານສາມາດພິມ, ສຳເນົາ, ໂພສ ຫຼື ສົ່ງຂໍ້ຄວາມໄດ້ໂດຍບໍ່ເສຍຄ່າ ກັບບົດຄວາມສະບັບເຕັມນີ້. ແນວໃດກໍ່ຕາມ, ທ່ານສາມາດເພີ່ມຊື່ ຫຼື ໂລໂກ້ຂອງພັນທະກິດ ຫຼື ຄຣິສຕະຈັກຂອງທ່ານໃສ່ໄດ້. ກິດຈະການໜຶ່ງແປດ ແມ່ນອີງໃສ່ພຣະຄຳພີເທົ່ານັ້ນ. ມັນໄດ້ຮັບການພັດທະນາຂຶ້ນເພື່ອຊ່ວຍເຫຼືອຜູ້ຄົນໃຫ້ມີຄວາມເຊື່ອໃນພຣະເຢຊູຄຣິດ ແລະ ເຕີບໂຕເປັນສາວົກຂອງພຣະອົງ. ການບໍລິການແປພາສາ ສຳລັບສະບັບທີ່ບໍ່ແມ່ນພາສາອັງກິດແມ່ນສະໜອງໃຫ້ໂດຍ www. ChristianLingua. com. ພຣະຄຳພີໃນສະບັບພາສາອັງກິດຕົ້ນສະບັບ ແມ່ນມາຈາກ ພະຄຳພີມາດຕະຖານອາເມຣິກາສະບັບໃໝ່. ພຣະຄຳພີໃນສະບັບນີ້ແມ່ນມາຈາກ "ພຣະຄຳພີສັກສິ (ພຄພ)".